**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ກອງທຶນຫລຸດຜ່ອນຄວາມທຸກຍາກ

# ໄລຍະ II

# ແຜນຄວບຄຸມການນຳໃຊ້ຢາປາບສັດຕູພືດ

**SIMPLIFY**
**PEST MANAGEMENT PLAN**
**(PMP)**

ສະບັບສຸດທ້າຍ, ມີນາ 2011

# ສາລະບານ

ພາກສະເໜີ .................... 4
ພາກທີ 1:     ລາຍລະອຽດຂອງໂຄງການ.................... 5
ພາກທີ 2 : ນະໂຍບາຍ ແລະ ລະບຽບຫລັກການ .................... 8
ພາກທີ 3 : ບັນຫາທີ່ສຳຄັນແລະວິທີການຫລຸດຜ່ອນ.................... 9

ພາກເພີ່ມເຕີມ 1: ປະເພດໂຄງການທີ່ບໍ່ໃຫ້ການສະໜັບສະໜູນ .................... 13
ພາກເພີ່ມເຕີມ 2.  ກົດລະບຽບ ເລກທີ 2860/ກຊກປ.................... 14
ພາກເພີ່ມເຕີມ 3.  ລາຍການຢາຂ້າແມງໄມ້ ໃນ ສປປ ລາວ .................... 14

# ລາຍການຄຳຫຍໍ້

| | |
|---|---|
| CDD | Community Driven Development |
| CRPF | Compensation and Resettlement Policy Framework |
| DAFO | District Agriculture and Forestry Office |
| DOA | Department of Agriculture |
| EGPF | Ethnic Group Policy Framework |
| EIA | Environmental Impact Assessment |
| ESMF | Environmental and Social Management Framework |
| FAO | Food and Agriculture Organization |
| GFDRR | Global Facility for Disaster Reduction and Recovery |
| GOL | Government of Lao PDR |
| IEC | Information, Education, Communication |
| IEE | Initial Evaluation Examination |
| JICA | Japan International Cooperation Agency |
| JSDF | Japanese Social Development Fund |
| KB | Koumban |
| LUFSIP | Lao Upland Food Security Improvement Project |
| MAF | Ministry of Agriculture and Forestry |
| MIS | Management Information System |
| M/E | Monitoring and Evaluation |
| NTFP | Non Timber Forest Product |
| OP | Operation Policy of the World Bank |
| O&M | Operation and Maintenance |
| PAFO | Provincial Agriculture and Forestry Office |
| PDO | Project Development Objective |
| PMP | Pest Management Plan |
| PMT | Project Management Team (central level) |
| PRF | Poverty Reduction Fund |
| PRF I | PRF Phase I |
| PRF II | PRF Phase II |
| WB | The World Bank |
| WHO | World Health Organization |

## ພາກສະເໜີ

ກອງທຶນຫລຸດຜ່ອນຄວາມທຸກຍາກໄລຍະ II (ທລຍ II) ໄດ້ອອກແບບແລະຈັດຕັ້ງປະບັດໂດຍນໍາໃຊ້ຮູບແບບການພັດທະນາດ້ວຍການຂັບເຄື່ອນໂດຍຊຸມຊົນມີສ່ວນຮ່ວມ ຊຶ່ງຖອດຖອນບົດຮຽນຈາກ ທລຍ ໄລຍະ ທີ 1 (2003-2011). ຈຸດປະສົງຂອງ ທລຍ (ຈພທ) ແມ່ນ ເພື່ອປັບປຸງການເຂົ້າເຖິງ ແລະ ການຊົມໃຊ້ພື້ນຖານທາງດ້ານເສດຖະກິດສັງຄົມ ແລະ ການບໍລິການຕ່າງໆ ຂອງຊຸມຊົນທີ່ຈັດຕັ້ງປະຕິບັດຢູ່ໃນພື້ນທີ່ເປົ້າໝາຍຂອງ ທລຍ ໄລຍະທີ 2 ຜ່ານຂະບວນການວາງ ແຜນ, ຈັດຕັ້ງປະຕິບັດ ແລະຕິດຕາມຂອງຊຸມຊົນແບບເປີດກ້ວາງ.

ທະນາຄານໂລກ (ທຄລ) ໄດ້ກໍານົດ ການຈັດຕັ້ງປະຕິບັດຂອງ ທລຍ 2 ເຂົ້າຢູ່ໃນ “ປະເພດ ຂ ” ແລະ ບໍ່ນອນຢູ່ໃນ 10 ນະໂຍບາຍດ້ານການປ້ອງກັນດ້ານສັງຄົມແລະສິ່ງແວດລ້ອມ, ໃນນັ້ນມີ 4 ນະໂຍບາຍທີ່ຕ້ອງໄດ້ປະຕິບັດເຊັ່ນ: ນະໂຍບາຍການປະເມີນ ສິ່ງແວດລ້ອມ (ຫົວຂໍ້ 4.01), ນະໂຍບາຍກ່ຽວກັບການຄວບຄຸມຢາຂ້າສັດຕູພືດ (ຫົວຂໍ້ 4.09), ນະໂຍບາຍ ກ່ຽວກັບ ຊົນເຜົ່າຕ່າງໆ (ຫົວຂໍ້ 4.10), ແລະ ນະໂຍບາຍກ່ຽວກັບການປົກປ້ອງ ການຍົກຍ້າຍຖິ່ນຖານແບບບໍ່ສະໝັກໃຈ (ຫົວຂໍ້ 4.12.) ເພື່ອສະແດງໃຫ້ເຫັນຮູບແບບຂອງແຕ່ລະປະເພດໂຄງການທີ່ນອນ ຢູ່ໃນໂຄງການພັດທະນາແບບມີສ່ວນຮ່ວມແລະລັກສະນະຂອງໂຄງການເປັນໂຄງການຂະໜາດນ້ອຍຊຶ່ງອາດບໍ່ມີ ຜົນກະທົບຫລາຍຕໍ່ສະພາບແວດລ້ອມ. ເຖິງຢ່າງໃດກໍ່ຕາມໂຄງການຂະໜາດນ້ອຍບາງຄັ້ງກໍ່ຍັງຕ້ອງຮຽກຮ້ອງໃຫ້ມີການທົດແທນຄືນດ້ານເນື້ອທີ່ດິນເລັກນ້ອຍ ແລະ ອາດກໍ່ໃຫ້ເກີດຜົນກະທົບທາງບວກຕໍ່ສະພາບແວດລ້ອມ ແລະ ຊຸມຊົນໃນບໍລິເວັນດັ່ງ ກ່າວແຕ່ຜົນກະທົບນັ້ນອາດຈໍາກັດຢູ່ສະເພາະບາງພື້ນທີ່ໃດນຶ່ງ,ເປັນລັກສະນະຊົ່ວຄາວ ແລະ ສາມາດຫລຸດຜ່ອນຜົນກະທົບລົງໄດ້ດ້ວຍການວາງແຜນ ແລະ ກໍ່ສ້າງທີ່ດີ.

ເພື່ອໃຫ້ສອດຄ່ອງກັບຄູ່ມືຈັດຕັ້ງປະຕິບັດ(ຫົວຂໍ້4.01,4.09,4.10,ແລະ4.12) ຈຶ່ງໄດ້ມີການກະກຽມ 4 ເອກະສານສະເພາະເຊັ່ນ[1]:

- ກອບນະໂຍບາຍໃນການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (ກນທຍ),
- ກອບນະໂຍບາຍ ຊົນເຜົ່າຕ່າງໆ (ກນຊ),
- ກອບນະໂຍບາຍດ້ານສັງຄົມ ແລະສິ່ງແວດລ້ອມ (ກນສສ)
- ແຜນການຄວບຄຸມຢາປາບສັດຕູພືດ(ຜຢພ).

ແຜນການຄວບຄຸມຢາປາບສັດຕູພືດແບບເຂົ້າໃຈງ່າຍນີ້(ຜຢສ).ຈຸດປະສົງແມ່ນເພື່ອໃຫ້ຄວາມຮູ້ພື້ນຖານແກ່ການນໍາໃນຂັ້ນສູນກາງ,ແຂວງ,ເມືອງ,ທີມງານ ທລຍ, ທີ່ປຶກສາ,ທີມງານກຸ່ມບ້ານ,ອໍານາດການ ປົກຄອງບ້ານ, ຊຸມຊົນ ຜູ້ໄດ້ຮັບຜົນປະໂຫຍດ, ພາກລັດແລະເອກະຊົນ. ເພື່ອໃຫ້ມີຄູ່ມືໃນການແກ້ໄຂບັນຫາທາງດ້ານການປ້ອງກັນທາງສັງຄົມໃນປຶ້ມຄູ່ມືຈັດຕັ້ງປະຕິບັດ(ຫົວຂໍ້4.09). ຂັ້ນຕອນດັ່ງກ່າວຈະໄດ້ຈັດຕັ້ງປະຕິບັດໃນຮອບວຽນຂອງ ທລຍ ແລະ ປະສົມປະສານເຂົ້າໃນການຄັດເລືອກໂຄງການ, ອະນຸມັດໂຄງການ, ຈັດຕັ້ງປະຕິບັດ ແລະ ຂັ້ນຕອນການຕິດຕາມປະ ເມີນຜົນ. (ຜຢພ)ແມ່ນບັນຫາທີ່ສໍາຄັນທີ່ພົວພັນເຖິງຈັດຊື້ ແລະ ນໍາໃຊ້ຢາຂ້າແມງໄມ້, ປຸຍເຄມີ ແລະ ກໍານົດວິທີການ ຫລຸດຜ່ອນກ່າວໄປເຖິງວິທີການປ້ອງກັນ, ການຝຶກອົບຮົມ ແລະ ຄໍາແນະນໍາໃນການນໍາໃຊ້ຢາປາບສັດຕູພືດທີ່ປອດໄພ. (ຜຢພ) ແມ່ນໄດ້ປັບປຸງຈາກເອກະສານ (ESMF) ຂອງໂຄງການຄໍ້າປະກັນສະບຽງ

1. ຊຶ່ງເອກະສານຕ່າງໆເລົ່ານີ້ຈະໄດ້ເຜີຍແຜ່ (ເປັນພາສາລາວ ແລະ ພາສາອັງກິດ) ຢູ່ ໃນສູນລວມຂໍ້ມູນຂອງທະນາຄານໂລກ ແລະ ຫ້ອງການ ທລຍ ວຽງຈັນ, ແຂວງ, ເມືອງ, ບ້ານ ແລະ ຫ້ອງການ ທະນາຄານໂລກປະຈໍານະຄອນຫລວງວຽງຈັນ.

ອາຫານເຂດເນີນສູງ (LUFSIP) ເຊິ່ງໄດ້ພັດທະນາຈາກສ່ວນນຶ່ງ ເພື່ອສະໜັບສະໜູນໃຫ້ການຈັດຕັ້ງປະຕິບັດ. (ຜຢພ)ຈະໄດ້ນຳໃຊ້ເຂົ້າໃນກິດຈະກຳຂອງ ທລຍ ໄລຍະ 2 ທີ່ພົວພັນເຊິງໂຄງລ່າງພື້ນຖານກະສິກຳພາຍໃຕ້ ຮ່ວງທີ 1 ແລະໂຄງການທົດລອງປັບປຸງຊີວິດການເປັນຢູ່ພາຍໃຕ້ງົບປະມານຂອງປະທດຍີ່ປຸ່ນ (JSDF). ເອກະສານ (ຜຢພ) ຈະໄດ້ນຳໃຊ້ໃນໂຄງການ ທລຍ 2 ຄູ່ກັນກັບເອກະສານ (ESMF), (CRPF) ແລະ(EGPF).

***ພາກສ່ວນຮັບຜິດຊອບ:*** ພະນັກງານ ທລຍ ຢູ່ໃນຂັ້ນສູນກາງແລະຢູ່ໃນຂັ້ນທ້ອງຖິ່ນຈະເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນການຄວບຄຸມຢາປາບສັດຕູພືດແລະຮັບປະກັນໃຫ້ໄດ້ນຳໃຊ້ທັງໝົດ,ລວມມີການເກັບຮັກສາເອກະສານເພື່ອໃຫ້ທີມງານທະນາຄານໂລກກວດກາ

ເອກະສານດັ່ງກ່າວນີ້ແມ່ນຖືກຮັບຮອງໃຫ້ເປັນເອກະສານອ້າງອີງ ແລະ ສາມາດປັບປ່ຽນໄດ້ ໃນກໍລະນີມີການປ່ຽນແປງຮູບແບບ ແລະ ກິດຈະກຳຂອງການຈັດຕັ້ງປະຕິບັດ ຊຶ່ງໃນນີ້ຕ້ອງໄດ້ມີການປຶກສາຫາລືກັບຜູ້ໃຫ້ທຶນໂດຍສະເພາະແມ່ນທີມງານທະນາຄານໂລກ.

## ພາກທີ 1: ລາຍລະອຽດຂອງໂຄງການ

ໂຄງການ ທລຍ ໄລຍະ 2 ຈະຈັດຕັ້ງປະຕິບັດໃນເວລາທັງໝົດ 5 ປີ (2011-2016) ປະກອບມີ 3 ອົງປະກອບໃຫ່ຍດັ່ງຕໍ່ໄປນີ້:

### ອົງປະກອບທີ 1: ສຳລັບພັດທະນາໂຄງລ່າງພື້ນຖານໃນຊຸມຊົນ

- *ການວາງແຜນພັດທະນາທ້ອງຖິ່ນແລະຊຸມຊົນ* ການວາງແຜນຂັ້ນກຸ່ມບ້ານຈະເປັນໄລຍະ 4 ປີ. ຊາວບ້ານຈະໄດ້ກະກຽມແຜນພັດທະນາຈະລວມມີການປະສານກັນໃນຂັ້ນກຸ່ມບ້ານ ໂດຍຜ່ານຂະບວນການຄັດເລືອກດ້ວຍຕົວແທນຂອງແຕ່ລະບ້ານເຂົ້າຮ່ວມ. ການວາງແຜນຂັ້ນກຸ່ມບ້ານຈະໄດ້ເອົາໄປຜ່ານກັນຄືນທຸກໆປີໂດຍຜ່ານຂະບວນການມີສ່ວນຮ່ວມຂັ້ນບ້ານ, ກຸ່ມບ້ານ ແລະ ຂັ້ນເມືອງ.ຕ້ອງໄດ້ຄຳນຶງໄວ້ວ່າຈຸດປະສົງຂອງ ທລຍ ແມ່ນໃຫ້ອຳນາດແກ້ຊຸມຊົນ, ໃຫ້ຊາວບ້ານມີຄວາມເຂັ້ມແຂງໃນການມີສ່ວນຮ່ວມ ແລະ ມີກຳລັງໃຈເຂົ້າຮ່ວມໃນຂະບວນການວາງແຜນ, ຈັດຕັ້ງປະຕິບັດແລະຕິດຕາມໂຄງການຍ່ອຍ.
- *ໂຄງການຍ່ອຍຊຸມຊົນ :* ໂຄງການຍ່ອຍດັ່ງກ່າວຈະໄດ້ຈັດຕັ້ງປະຕິບັດ ແລະ ສະໜັບສະໜູນເປັນປະຈຳປີ. ຮ່ວງດັ່ງກ່າວຈະສະໜັບສະໜູນກິດຈະກຳຝຶກອົບຮົມທີ່ຕິດພັນກັບໂຄງການຍ່ອຍໂດຍກົງ. ໂຄງການຍ່ອຍຈະໄດ້ຄັດເລືອກເພື່ອການລົງທືນໃນຂັ້ນກຸ່ມບ້ານດ້ວຍຄະນະກຸ່ມບ້ານຂອງ ທລຍ (ປະກອບມີບ້ານທີ່ຄັດເລືອກລວມມີຜູ້ຍິງ ແລະ ຊົນເຜົາ). ພະນັກງານ ທລຍ ຂັ້ນເມືອງ, ອຳນາດການປົກຄອງເມືອງ ແລະ ຂະແໜງການວິຊາການຂັ້ນເມືອງ ຈະໄດ້ໃຫ້ການຢັ້ງຢືນທາງດ້ານວິຊາການ ກ່ຽວກັບການສະເໜີໂຄງການດັ່ງກ່າວ. ການຕັດສິນເອົາໂຄງການຍ່ອຍທີ່ຈະສະໜັບສະໜູນຈະຕ້ອງໃຫ້ມີຄວາມໂປ່ງໃສໃນຂັ້ນກຸ່ມບ້ານ ດ້ວຍຄະນະກຳມະການຂັ້ນກຸ່ມບ້ານບົນພື້ນຖານມາດຕະຖານທີ່ໄດ້ກຳນົດໄວ້ໃນຄູ່ມືຈັດຕັ້ງປະຕິບັດໂຄງການ(POM). ໂຄງການຍ່ອຍ ທລຍ ໄລຍະ 2 ຈະຕ້ອງ ໃຫ້ໄດ້ຕາມຕາດຕະຖານເຕັກນິກທີ່ເໝາະສົມສຳລັບໂຄງລ່າງພື້ນຖານ ທີ່ໄດ້ຕົກລົງກັບກະຊວງທີ່ກ່ຽວຂ້ອງ. ກິດຈະກຳທີ່ຈະໃຫ້ການຊ່ວຍເຫລືອພາຍໄຕ້ຮວ່ງດັ່ງກ່າວ ຈະຕ້ອງໄດ້ກຳນົດໄວ້ສະເພາະ ແລະ ຈະບໍ່ລວມຢູ່ໃນລາຍການທີ່ບໍ່ໃຫ້ການສະໜັບສະໜູນ.

- *ຄວາມສຳຄັນໃນການຄວບຄຸມຄວາມສ່ຽງຈາກໄພພິບັດ (ຄສພ) ການພັດທະນາໃນຮູບແບບ (Cool CDD) :* ທລຍ 2 ຈະເຮັດບົດບາດສຳຄັນໃນການຄວບຄຸມຄວາມສ່ຽງຈາກໄພພິບັດໃນຂັ້ນກຸ່ມບ້ານແລະຂັ້ນບ້ານ. ໜ້າວຽກ ດັ່ງກ່າວປະກອບມີ :(1) ສົ່ງເສີມພື້ນຖານໂຄງລ່າງທີ່ ທລຍ ໃຫ້ການຊ່ວຍເຫລືອເພື່ອປ້ອງກັນຄວາມສ່ຽງຈາກໄພທຳມະຊາດ,(2) ກຳຕົວຄູນເພື່ອອອກແບບໃສ່ໂຄງການຍ່ອຍໃໝ່ຂອງ ທລຍ ໃນບ່ອນທີ່ມີຄວາມສ່ຽງສູງຈາກໄພທຳມະຊາດ,(3) ຊ່ວຍຊຸມຊົນເພື່ອກຳນົດຄວາມສ່ຽງຈາກໄພທຳມະຊາດ ; ແລະ (4) ອານຸຍາດໃຫ້ມີຄວາມຢືດຢູ່ນໃນດ້ານງົບປະມານຂອງ ທລຍ 2 ເພື່ອຊ່ວຍຊຸມຊົນຟື້ນຟູໄພພິບັດຈາກທຳມະຊາດໃນກຸ່ມເປົ້າໝາຍ ທລຍ 2
- *ຄວາມສຳຄັນຂອງບົດບາດຍິງຊາຍ:* ກຸ່ມຍິງ ແລະ ກຸ່ມຊາຍມີຄວາມຕ້ອງການແຕກຕ່າງກັນໃນເວລາຄັດເລືອກໂຄງການ,ຂໍ້ຈຳກັດແລະໂອກາດກໍ່ຍັງເປັນບັນຫາທີ່ສຳຄັນສຳລັບ ທລຍ 2 ແລະ ໂຄງການຈະພັດທະນາແຜນຈັດຕັ້ງປະຕິບັດຂອງບົດບາດຍິງຊາຍ.

**ອົງປະກອບທີ 2 ພັດທະນາຄວາມສາມາດໃຫ້ຊຸມຊົນແລະໃນທ້ອງຖິ່ນ :**

- *ຂັ້ນບ້ານແລະກຸ່ມບ້ານ :* ອົງປະກອບນີ້ຈະສະໜັບສະໜູນຈຸດປະສົງຂອງ ທລຍ ໃນການໃຫ້ອຳນາດແກ່ຊຸມຊົນ ດ້ວຍການຝຶກອົບຮົມໃນການປະເມີນຄວາມຕ້ອງການຂອງພວກເຂົາເອງ,ປຶກສາຫາລືກັບອຳນາດການປົກຄອງ, ຈັດຕັ້ງປະຕິບັດແລະຕິດຕາມການລົງທືນໃສ່ການກໍ່ສ້າງໂຄງລ່າງພື້ນຖານຂະໜາດນ້ອຍ, ການຈັດຊື້-ຈັດຈ້າງ, ການຄຸ້ມຄອງການເງິນ, ການຄຸ້ມຄອງ ແລະ ບົວລະບັດຮັກສາ ແລະ ອັນສຸດທ້າຍແມ່ນການຕິດຕາມຜົນໄດ້ຮັບຈາກໂຄງການໃນຂັ້ນຊຸມຊົນແລະຂັ້ນກຸ່ມບ້ານ.
- *ຂັ້ນເມືອງແລະຂັ້ນແຂວງ:* ອົງປະກອບນີ້ແມ່ນລົງທືນໃສ່ວຽກງານການເສີມສ້າງຂີດຄວາມສາມາດໃຫ້ພະນັກງານຂັ້ນເມືອງ ແລະ ຂັ້ນແຂວງເພື່ອສຸກຍູ້ໃຫ້ຊຸມຊົນ ແລະ ຜູ້ທຸກຍາກ ເຂົ້າຮ່ວມຂະບວນການພັດທະນາ, ລວມມີການຝຶກອົບຮົມການເງິນໃຫ້ຊຸມຊົນ ແລະ ແຜນພັດທະນາທ້ອງຖິ່ນ, ການຄຸ້ມຄອງການເງິນ ແລະ ການຈັດຊື້-ຈັດຈ້າງ.
- *ຂັ້ນສູນກາງ:* ອົງປະກອບນີ້ຈະສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ຄະນະຊີ້ນຳເພື່ອສະໜັບສະໜູນໃນຄວາມພະຍາຍາມການແກ້ໄຂຄວາມທຸກຍາກແຫ່ງຊາດ, ສົ່ງເສີມການປະສານງານການລົງທືນຂອງ ທລຍ 2 ກັບບັນດາກະຊວງຕ່າງໆແລະອົງການຈັ້ດຕັ້ງອື່ນໆ ທີ່ສະໜັບສະໜູນໃນການພັດທະນາຊົນນະບົດໃນກຸ່ມບ້ານເປົ້າໝາຍຂອງ ທລຍ 2.

**ອົງປະກອບທີ 3 ການຄຸມຄອງໂຄງການແລະສຸກຍູ້ການຈັດຕັ້ງປະຕິບັດ**

- ອົງປະກອບນີ້ຈະສະໜັບສະໜູນໃນວຽກງານການຈັດຕັ້ງປະຕິບັດ, ການຕິດຕາມ, ການປະເມີນຜົນ ແລະ ການລາຍງານສຳລັບ ທລຍ 2 .ມັນຈະລວມມີເງິນເດືອນ ແລະ ຄ່າຈ້າງພະນັກງານ ທລຍ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ, ອຸປະກອນຮັບໃຊ້ໂຄງການ ແລະ ງົບປະມານບໍລິຫານ; ການຄວບຄຸມລະບົບຖານຂໍ້ມູນ(MIS), ການສຶກສາ ແລະ ປະເມີນຜົນທີ່ສຳຄັນ, ການບັນຊີ, ປະເມີນຜົນການຈັດຊື້-ຈັດຈ້າງ, ການບໍລິການ ທາງກົດໝາຍ, ການກວດກາບັນຊີ ແລະ ວຽກງານອື່ນເປັນອັນສະເພາະ. ຊ່ວຍວຽກງານວິຊາການທີ່ສຳຄັນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກໍ່ໃຫ້ການ ສະໜັບສະໜູນ ແລະ ນອນຢູ່ໃນອົງປະກອບນີ້

**ສະໜັບສະໜູນກິດຈະກຳການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ**

ນອກຈາກນີ້ຈຸດສຳຄັນຂອງ ທລຍ 2 ຈະໄດ້ໃຫ້ການຊ່ວຍເຫລືອກິດຈະກຳທີ່ຕິດພັນການປັບປຸງຊີວິດການເປັນຢູ່, ຈະເປັນໂຄງການທົດລອງໂດຍນຳໃຊ້ທຶນ (2.6 ລ້ານດອນລ່າສະຫະລັດ) ຂອງກອງທຶນພັດທະນາສັງຄົມຂອງປະເທດຢີ່ປຸ່ນ (JSDF). ການຈັດຕັ້ງປະຕິບັດນີ້ ຈະໄດ້ມີການຄັດເລືອກເອົາຊຸມຊົນໃນແຂວງຫົວພັນ ແລະ ແຂວງສະຫວັນນະເຂດໃນຮູບແບບເປັນການທົດລອງ ເພື່ອໃຫ້ມີປະສິດຕິຜົນແລະຄວາມຍືນຍົງໃນການປັບປຸງຊີວິດການເປັນຢູ່ຊຸມຊົນທີ່ທຸກຍາກໃນເຂດຊົນນະບົດ ໂດຍສະເພາະແມ່ນໂຄງການທົດລອງລຸ່ມນີ້:

- **<u>ສ້າງກຸ່ມຊຸມຊົນທີ່ສາມາດຊ່ວຍຕົນເອງໄດ້ ແລະ ສ້າງບຸກຄະລະກອນຂອງຜູ້ໃຫ້ການບໍລິການ :</u>** ອົງປະກອບນີ້ຈະເນັ້ນໜັກໃສ່ກຸ່ມທີ່ມີແລ້ວ, ຈະໄດ້ເລັງໃສ່ກຸ່ມຜູ້ຍິງທີ່ມີແລ້ວໃນກຸ່ມຊົນເຜົ່າ ແລະ ສ້າງຂີດຄວາມສາມາດຂອງກຸ່ມນີ້ທີ່ຕິດພັນກັບຄວາມຕ້ອງການຂອງເຂົ້າເຈົ້າ ເພື່ອໃຫ້ກິດຈະກຳປັບປຸງຊີວິການເປັນຢູ່ ມີການຈັດຕັ້ງສຳເລັດ ແລະ ຍືນຍົງ. ອົງປະກອບນີ້ຍັງຈະໄດ້ຝຶກອົບຮົມໃຫ້ນັກສຶກສາທີ່ຈົບໃໝ່ ເພື່ອບໍລິການແລະເປັນຜູ້ປະສານງານໃຫ້ຊຸມຊົນ. ສ້າງຄວາມສາມາດແລະຄວາມຮັບຜິດຊອບຂອງຜູ້ໃຫ້ບໍລິການພາຍໃນທ້ອງຖິ່ນ ແລະ ສາມາດຊ່ວຍເຫລືອທາງດ້ານວິຊາການແກ່ຊຸມຊົນໃນເວລາຕ້ອງການ.
- **<u>ສ້າງຕັ້ງກຸ່ມທ່ອນເງິນໃນຊຸມຊົນ</u>** : ກຸ່ມດັ່ງກ່າວຈະໄດ້ໃຫ້ການສະໜັບສະໜູນເປັນເງິນ ( ປະມານ 2,000 ໂດລາສະຫະລັດຕໍ່ບ້ານ) ໃຫ້ບ້ານທີ່ເໝາະສົມໂດຍຜ່ານຂະບວນການຄັດເລືອກ, ແຂ່ງຂັນ ແລະ ການມີສ່ວນຮ່ວມ ເພື່ອສະໜັບສະໜູນໃຫ້ການວາງແຜນ, ການຈັດຕັ້ງປະຕິບັດ ແລະ ຄວາມຍືນຍົງຂອງກິດຈະກຳປັບປຸງຊີວິການເປັນຢູ່. ກິດຈະກຳພາຍໄຕ້ຫົວຂໍ້ນີ້ແມ່ນເນັ້ນໜັກໃສ່ການໃຫ້ອຳນາດໃນການມີສ່ວນຮ່ວມທາງດ້ານວິຊາການ, ສົ່ງເສີມຄວາມຍືນຍົງດ້ວຍການສ້າງໃຫ້ຊຸມຊົນຮູ້ກ່ຽວກັບເງິນ, ສ້າງລະບົບເຊື່ອມຕໍ່ກັບຕະຫລາດ ແລະ ກິດຈະກຳສົ່ງເສີມການປັບປຸງຊີວິດການເປັນຢູ່ໃນການໃຫ້ອາຫານເສີມທີ່ຖືກຕ້ອງ.
- **<u>ກິດຈະກຳ ແລະ ການປະເມີນການມີສ່ວນຮ່ວມໃນການໃຫ້ອາຫານເສີມ</u>**: ສືບຕໍ່ຫລຸດຜ່ອນອັດຕາຄວາມທຸກຍາກ ແລະ ເພີ່ມລາຍຮັບຕໍ່ຫລັງຄາເຮືອນໃນ ສປປ ລາວ ກໍ່ຍັງບໍ່ໄດ້ເຮັດໃຫ້ມີຄວາມສຳຄັນໃນການປັບປຸງການຂາດອາຫານໃນໄລຍະ 15 ຜ່ານມາ. ໃນອົງປະກອບນີ້ຈະຮັບປະກັນວ່າການໃຫ້ທຶນແກ່ກຸ່ມທີ່ມີແລ້ວ ເພື່ອປັບປຸງຊີວິດການເປັນຢູ່ເພື່ອໃຫ້ມີຜົນກະທົບທາງທາງບວກຕໍ່ຊຸມຊົນ ໃນດ້ານການໃຫ້ອາຫານແກ່ຊຸມຊົນ. ການມີສ່ວນຮ່ວມໃນການປະເມີນການໃຫ້ອາຫານເສີມແລະກິດຈະກຳດັ່ງກ່າວ ຈະໄດ້ສະເໜີໃນພື້ນທີ່ເປົ້າໝາຍຂອງການເຮັດທົດລອງ ເພື່ອອະນຸຍາດໃຫ້ມີການປະເມີນຢ່າງມີປະສິດຕິຜົນ ແລະ ຕິດພັນກັບພື້ນຖານການປັບປຸງຊີວິດການເປັນຢູ່ດ້ວຍໂຄງການອາຫານເສີມ.
- **<u>ຕິດຕາມແລະການປະເມີນຜົນກະທົບຂອງໂຄງການທົດລອງ</u>** : ອົງປະກອບນີ້ຈະໄດ້ປະເມີນຜົນການກະທົບທົດລອງຄືກັນກັບປະສິດຕິພາບຂອງກົນໄກຕິດຕາມການຈັດຕັ້ງປະຕິບັດ,ດ້ວຍບົດຮຽນຂອງ ທລຍ ໃນການວາງແຜນ.

ທລຍ ແມ່ນການຂັບເຄື່ອນດ້ວຍຊຸມຊົນ, ບົນພື້ນຖານການວາງແຜນແບບມີສ່ວນຮ່ວມ, ເຊິ່ງປະສົມປະສານກັບກິດຈະກຳຂອງ ທລຍ. ຂັ້ນຕອນການວາງແຜນໃນປະຈຸບັນ ຈະໄດ້ປັບປຸງໃນຄູ່ມືຈັດຕັ້ງປະຕິບັດເພື່ອໃຫ້ເໝາະສົມກັບການວາງແຜນໃນຮອບວຽນ 3 ປີ (ດັ່ງທີ່ໄດ້ສະເໜີໃນຂະບວນການວາງແຜນປະຈຳປີ, ຊຶ່ງໄດ້ນຳໃຊ້ໃນ ທລຍ 1).

## ພາກທີ 2 : ນະໂຍບາຍ ແລະ ລະບຽບຫລັກການ

ນະໂຍບາຍການປ້ອງກັນສັງຄົມ ແລະ ສິ່ງແວດລ້ອມຂອງທະນາຄານໂລກຕໍ່ກັບການຄວບຄຸມຍາປາບສັດຕູພືດ (ຫົວຂໍ້ 4.01) (ການຄວບຄຸມຍາປາບສັດຕູພືດ) ຈຸດປະສົງ ແມ່ນເພື່ອຫລຸດຜ່ອນແລະຄວບຄຸມການນຳໃຊ້ສານເຄມີທີ່ມີຄວາມສ່ຽງຕໍ່ສຸຂະພາບຂອງຜູ້ນຳໃຊ້ ແລະ ສົ່ງເສີມໃຫ້ນຳໃຊ້ທີ່ມີຄວາມປອດໄພ ແລະ ມີປະສິດຕິຜົນໃນວຽກງານປ້ອງກັນສະພາບແວດລ້ອມ ແລະ ການຄວມຄຸມຍາປາບສັດຕູພືດ. (ຫົວຂໍ້ 4.09) ໃນ ທລຍ 1 ແມ່ນບໍ່ໄດ້ກ່ຽວຂ້ອງ ແລະ ກໍ່ບໍ່ໄດ້ໃຫ້ການສະໜັບສະໜູນໃນການນຳໃຊ້ຢາຂ້າແມງໄມ້ ແລະ/ຫລື ປຸຍເຄມີຕ່າງໆ. ຈາກການຈັດຕັ້ງປະຕິບັດຂອງ ທລຍ ໄລຍະທີ 1 ຜ່ານມາເຫັນໄດ້ວ່າ ທລຍ ໄດ້ສົ່ງເສີມໂຄງລ່າງພື້ນຖານກະສິກຳຈຳນວນນຶ່ງ ມັນເປັນການສົ່ງເສີມໃຫ້ນຳໃຊ້ປຸຍເຄມີ ແລະ ຢາຂ້າແມງໄມ້ໃນບາງໂຄງການໂດຍທາງອ້ອມ. ທລຍ 2 ຈະໄດ້ສົ່ງເສີມກິດຈະກຳປັບປຸງຊີວິດການເປັນຢູ່ດ້ວຍທຶນຂອງ (JSDF) ປະເທດຍີ່ປຸ່ນ ໂດຍການຄັດເລືອກເອົາຊຸມຊົນທີ່ສາມາດເປັນຕົວແບບທົດລອງເພື່ອໃຫ້ມີປະສິດຕິຜົນ ແລະ ມີຄວາມຍືນຍົງໃນການປັບປຸງຊີວິດການເປັນຢູ່ຂອງຊຸມຊົນທີ່ທຸກຍາກ. ນອກຈາກນັ້ນ ທລຍ ຍັງໄດ້ສະໜັບສະໜູນໃນການຈັດຕັ້ງປະຕິບັດຂອງອົງປະກອບທີ 3 ຂອງໂຄງການຄ້ຳປະກັນສະບຽງອາຫານ(LUFSIP). (ຫົວຂໍ້ 4.09) ແມ່ນຕ້ອງໄດ້ເຮັດດ່ວນໃນໂຄງການຄ້ຳປະກັນສະບຽງອາຫານ.

ໃນຄະນະທີ່ໂຄງການຈະບໍ່ຈັດຊື້ຫລືສົ່ງເສີມໃຫ້ນຳໃຊ້ສານເຄມີປາບສັດຕູພືດແລະປຸຍເຄມີ, ເຊິ່ງໄດ້ລະບຸໃນກົດ ຈະກຳທີ່ ທລຍ ບໍ່ໃຫ້ການສະໜັບສະໜູນ ແຕ່ກໍ່ບໍ່ສາມາດປ້ອງກັນບໍ່ໃຫ້ຊາວນານຳໃຊ້ສານເຄມີໄດ້ທັງໝົດ. ໂດຍສະເພາະແລ້ວ, ການຟື້ນຟູໂຄງການຊົນລະປະທານ, ການກໍ່ສ້າງຊົນລະປະທານຂະໜາດນ້ອຍ/ຜົນຜະລິດກະສິກຳ, ແລະ ການຄວບຄຸມການຄົບກວນຂອງພະຍາດ ລວມມີການນຳໃຊ້ຢາຂ້າແມງໄມ້ ແລະ ການຈັດຊື້ຢາຂ້າແມງໄມ້ໃນຈຳນວນໜ້ອຍ, ຢາກຳຈັດພືດແລະຢາຂ້າແມງໄມ້. ເພື່ອຫລຸດຜ່ອນຜົນກະທົບທີ່ຮ້າຍແຮງແຜນຄວບຄຸມຢາປາບສັດຕູພືດແບບງ່າຍດາຍໄດ້ກະກຽມເປັນຫົວຂໍ້ລະອຽດຂອງກົດລະບຽບ ແລະ ວິທີການສຳລັບການຄວບຄຸມຢາປາບສັດຕູພືດ ແລະ ສານເຄມີທີ່ເປັນອັນຕະລາຍ ພ້ອມດຽວກັນນັ້ນ ກໍ່ຍັງໃຫ້ຄວາມຮູ້ ແລະ ການຝຶກອົບຮົມກ່ຽວກັບສຸຂະພາບ ຜົນກະທົບ ແລະ ນຳໃຊ້ຢາປາບສັດຕູພືດທີ່ປອດໄພ ແລະ ຖ້າເປັນໄປໄດ້ ຈະສົ່ງເສີມການນຳໃຊ້ຝຸ່ນທຳມະຊາດ ເພື່ອເຮັດສ່ວນປອດສານເຄມີ. ທລຍ ຈະໄດ້ເຮັດວຽກກັບຂະແໜງກະສິກຳ ເພື່ອນຳໃຊ້ເຕັກນິກນິເວດກະສິກຳ ທີ່ອະນຸມັດໂດຍກະຊວງກະສິກຳແລະປ່າໄມ້ (ກຊກປ) ໃນປີ 2006 ສຳລັບວຽກງານກະສິກຳ. ແຜນຄວບຄຸມຢາປາບສັດຕູພືດ ນີ້ແມ່ນໄດ້ດັດແກ້ມາຈາກແຜນຄວບຄຸມຢາປາບສັດຕູພືດ ທີ່ໄດ້ກະກຽມກັບໂຄງການປັບປຸງຊີວິດການເປັນຢູ່.

### ລະບຽບຂອງລັດຖະບານຕໍ່ກັບການຄວບຄຸມຢາປາບສັດຕູພືດ.

ໃນເດືອນ ມີນາ,2000,ໂດຍການສະໜັບສະໜູນໂດຍອົງການ(JICA) ແລະ ອົງການ(FAO), ກະຊວງກະສິກຳ ແລະ ປ່າໄມ້ (MAF) ໄດ້ສ້າງກົດລະບຽບ ເລກທີ 0886/ກຊກປ ແລະ ໃນປະຈຸບັນນີ້ໄດ້ປັບປຸງໃນເດືອນ 6 ປີ 2010 ມາເປັນກົດລະບຽບເລກທີ 2860/ກຊກປ (ພາກເພີ່ມເຕີມ 2) ໃນຫົວຂໍ້ ການຄວບຄຸມຢາປາບສັດຕູພືດໃນ ສປປ ລາວ. ກົດລະບຽບໄດ້ພັດທະນາບົນພື້ນຖານຄຳຄິດເຫັນຂອງອົງການອານາໄມໂລກ ທີ່ໄດ້ກຳນົດວ່າ ຢາຂ້າແມງໄມ້ ເປັນຢາອັນຕະລາຍ ແລະ ສ້າງເປັນປື້ມຄູ່ມືໃນປີ 19949-1995. ລັດຖະບານ ສປປ ລາວ ໄດ້ລົງທະບຽນນຳໃຊ້ໃນເດືອນມັງກອນ ປີ 2010. ທຸກບໍລິສັດ, ຫ້າງຮ້ານທີ່ນຳເຂົ້າຢາຂ້າແມງໄມ້, ປຸຍ ແລະ ແນວພັນຕ່າງໆ

ຕ້ອງໄດ້ປະຕິບັດຕາມລະບຽບດັ່ງກ່າວ. ລະບຽບການນຳໃຊ້ຢາຂ້າແມງໄມ້ໄດ້ມີການດັດແກ້ໃນເດືອນ ພຶດສະພາ ປີ 2010 ບົນພື້ນຖານລະບຽບໃໝ່. ກົມປູກຝັງພາຍໃຕ້ກະຊວງກະສິກຳ ແລະ ປ່າໄມ້ແມ່ນໄດ້ຖືກແຕ່ງຕັ້ງເປັນຜູ້ຮັບຜິດຊອບໃນການນຳໃຊ້ຢາຂ້າແມງໄມ້ທັງໝົດ

## ພາກທີ 3 : ບັນຫາທີ່ສຳຄັນ ແລະ ວິທີການຫລຸດຜ່ອນ

### ບັນຫາທີ່ພົວພັນເຖິງການນຳໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີ

ແຜນຄວບຄຸມຢາປາບສັດຕູພືດແມ່ນໄດ້ສ້າງຂຶ້ນ ເພື່ອຊຸກຍູ້ໂຄງການຂອງຊຸມຊົນ ແລະ ແມ່ນຄວາມຮັບຜິດຊອບຂອງທຸກພາກສ່ວນ ເພື່ອຊຸກຍູ້ໃຫ້ການຈັດຕັ້ງປະຕິບັດ. ຜົນກະທົບທາງລົບໃນການນຳໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີ ອາດຈະມີໜ້ອຍ ແລະ ໃຫ້ກຳນົດຂອບເຂດສະເພາະ ພື່ອສາມາດຫລຸດຜ່ອນໄດ້ໃນໄລຍະວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການ. ເຖິງຢາງໃດກໍ່ຕາມ ການນຳໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີແມ່ນເປັນປົກະຕິຂອງຊາວກະສິກອນຫລາຍໆຄົນ, ມັນກໍ່ເປັນເລື່ອງທີ່ສຳຄັນສຳລັບພະນັກງານ ຫລຍ ແລະ ຊຸມຊົນ ເພື່ອໃຫ້ເຂົ້າໃຈ ແລະ ສົ່ງເສີມໃຫ້ມີການນຳໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີໃຫ້ໜ້ອຍລົງ.

ຂ້າງລຸ່ມນີ້ແມ່ນການສະຫລຸບກິດຈະກຳທີ່ເປັນໄປໄດ້ ແລະ ພົວພັນເຖິງການນຳໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີພາຍໃຕ້ ຫລຍ 2

- ການຈັດຕັ້ງປະຕິບັດໂຄງການຍ່ອຍທີ່ພົວພັນເຖິງຊົນລະປະທານ (ຈະເປັນໂຄງການໃໝ່ຫລືຍົກລະດັບ) ອາດຈະກໍ່ໃຫ້ເກີດມີການນຳໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີ. ມັນຈະເກີດຂຶ້ນເປັນປົກກະຕິ ເມື່ອຊາວກະສິກອນຕ້ອງເພີ່ມຜົນຜະລິດກະສິກຳໃນພື້ນທີ່ຂອງເຂົາເຈົ້າ ແຕ່ມັນກໍ່ຈະໄຫລໄປບ່ອນໃໝ່ໄດ້. ມັນກໍ່ອາດເປັນໄປໄດ້ໃນເວລາມີວິທີການໃໝ່ ທີ່ໄດ້ສະເໜີໃຫ້ນຳໃຊ້ໃນພື້ນທີ່ກະສິກຳທີ່ເໝາະສົມ.
- ຫລຍ 2 ຈະໄດ້ສົ່ງເສີມກິດຈະກຳການຜະລິດໂດຍນຳໃຊ້ງົບປະມານທີ່ອະນຸມັດແລ້ວ (2.6 ລ້ານໂດລາສະຫະລັດ) ຈາກອົງການພັດທະນາສັງຄົມຂອງປະເທດຍີ່ປຸ່ນ(JSDF) ດ້ວຍການຄັດເລືອກເອົາແຂວງທີ່ເໝາະສົມ. ການຈັດຕັ້ງປະຕິບັດຈະໄດ້ຄັດເລືອກເອົາຊຸມຊົນທີ່ມີຄວາມເໝາະສົມ ເພື່ອຈະສ້າງເປັນຕົວແບບທົດລອງເພື່ອໃຫ້ມີປະສິດຕິຜົນ ແລະ ຄວາມຍືນຍົງໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນຜູ້ທຸກຍາກ. ກິດຈະກຳດັ່ງກ່າວສາມາດສົ່ງເສີມໃຫ້ຊຸມຊົນເຮັດເປັນບ່ອນສາທິດ ເຊັ່ນ: ການປູກເຂົ້າ, ສວນຜັກ, ອຸດສະຫະກຳປູກໄມ້ ແລະ ລ້ຽງສັດໃສ່ບ່ອນທີ່ມີການນຳໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີ ໂດຍການນຳໃຊ້ແບບຊຸມຊົນ.
- ຈາກປະສົບການຜ່ານມາ, ຫລາຍໂຄງການຍ່ອຍໃນ ຫລຍ 1 ໃນບ້ານເປົ້າໝາຍແມ່ນໄດ້ນຳໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີໃນວຽກງານກະສິກຳແລະການປູກຕົ້ນຢາງເປັນສາຍເຫດທີ່ກໍ່ໃຫ້ເກີດມີສານເຄມີໄຫລລົງສູ່ແມ່ນ້ຳຢູ່ໃກ້ຄຽງ

### ວິທີການຫລຸດຜ່ອນ

ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ, ຜົນກະທົບທາງລົບຈາກການນຳໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີສຳລັບກິດຈະກຳ ຫລຍ 2 ຈະມີໜ້ອຍ, ສາມາດກຳນົດຂອບເຂດແລະສາມາດຫລຸດຜ່ອນໄດ້ໃນເວລາວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການ. ໃນໄລຍະຈັດຕັ້ງປະຕິບັດໂຄງການກັບກຸ່ມບ້ານ, ມີໂອກາດປຶກສາຫາລື ແລະ ຊຸກຍູ້ໃຫ້ຊຸມຊົນຫລຸດຜ່ອນຜົນກະທົບໃນເວລາວາງແຜນ ແລະ ຄັດເລືອກໂຄງການຍ່ອຍ. ຈຸດສຳຄັນທີ່ໄດ້ສະຫລູບຂ້າງ

ລຸ່ມນີ້ ແມ່ນກິດຈະກໍາຈະຕ້ອງໄດ້ເອົາໃຈໃສ່ໃນເວລາວາງແຜນແລະຈັດຕັ້ງປະຕິບັດ ທລຍ 2 ກ່ຽວກັບແຜນຄວບຄຸມຢາປາບ ສັດຕູພືດ.

## ກ) ສິ່ງທີ່ຕ້ອງຫ້າມ

ເພື່ອຫລີກລ້ຽງຜົນກະທົບທາງລົບໃນການນໍາໃຊ້ຢາຂ້າແມງໄມ້, ການຈັດຊື້ຢາປາບສັດຕູພືດ, ຢາຂ້າແມງໄມ້ ແລະ ອື່ນໆທີ່ເປັນເຄມີອັນຕະລາຍທີ່ມີຄວາມຕ້ອງການເປັນຈໍານວນຫລາຍຈະບໍ່ອະນຸຍາດໃຫ້ ແລະ ກິດຈະກໍາດັ່ງກ່າວ ແມ່ນລວມຢູ່ໃນ (ລາຍການທີ່ບໍ່ໃຫ້ການສະໜັບສະໜູນ)

## ຂ) ການຝຶກອົບຮົມໃຫ້ພະນັກງານ ທລຍ

ທລຍ 2 ຈະຕ້ອງໃຫ້ຄວາມຮູ້ພື້ນຖານກ່ຽວກັບການນໍາໃຊ້ຢາໃນຫລາຍຮູບແບບສໍາລັບວຽກງານປັບປຸງຊີວິດການເປັນຢູ່, ລວມມີການນໍາໃຊ້ຢ່າງທີ່ຖືກຕ້ອງແລະສານເຄມີທີ່ມີທາດເບື່ອ. ຕ້ອງໄດ້ຂື້ນແຜນງົບປະມານສໍາລັບການຝຶກອົບຮົມໃຫ້ພະນັກງານ ທລຍ ເພື່ອໃຫ້ເຂົ້າໃຈກ່ຽວກັບ 1) ນະໂຍບາຍກ່ຽວກັບແຜນການຄວບຄຸມຢາປາບສັດຕູພືດ (ນະໂຍບາຍຂອງລັດຖະບານແລະຜູ້ໃຫ້ທຶນ); 2) ຄວາມຮູ້ພື້ນຖານກ່ຽວກັບຜົນກະທົບທາງລົບຕໍ່ສະພາບແວດລ້ອມ ແລະ ສຸກຂະພາບຈາກການນໍາໃຊ້ຢາຂ້າແມງໄມ້ແລະປຸຍເຄມີແລະ 3) ຄວາມຮູ້ ກ່ຽວກັບປ້ອງກັນລວມມີລາຍ ການທີ່ບໍ່ອະນຸຍາດໃຫ້ໃນປະເທດສໍາລັບຢາຂ້າແມງໄມ້ ແລະ ປຸຍເຄມີ, ວິທີຫລຸດຜ່ອນຜົນກະທົບຈາກການນໍາໃຊ້ຢາແລະອື່ນໆ (ການຝຶກອົບຮົມສາມາດເຮັດຮ່ວມກັບຫົວຂໍ້ອື່ນໆກໍ່ໄດ້ ). ສະລັບໂຄງການທີ່ມີການນໍາໃຊ້ປຸຍ, ຢາຂ້າແມງໄມ້ ແລະ ສາເຄມີທີ່ເປັນທາດເບື່ອ.

## ຄ) ການໃຫ້ຄວາມຮູ້ແກ້ຊາວກະສິກອນ

ກ່ອນມີການປຶກສາຫາລືຈະຕ້ອງໃຫ້ຄວາມຮູ້ແກ່ກຸ່ມບ້ານທີ່ມີໂຄງການ. ຫົວຂໍ້ກ່ຽວກັບແຜນການຄວບຄຸມຢາປາບສັດຕູພືດ ຄວນຈະເອົາເຂົ້າລວມກັນກັບກອງປະຊຸມປຶກສາຫາລືກັບຊາວບ້ານຢູ່ຂັ້ນກຸ່ມບ້ານ. ຖ້າໂຄງການກະສິກໍາ ຫາກຖືກຄັດເລືອກເປັນບຸລິມະສິດສໍາລັບບ້ານໃດນຶ່ງ ຫລື ໂຄງການປັບປຸງຊີວິດການເປັນຢູ່, ວິຊາການກ່ຽວກັບການຄວບຄຸມຢາປາບສັດຕູພືດຈະຕ້ອງໄດ້ຝຶກອົບຮົມຕາມລາຍລະອຽດດັ່ງນີ້:

- *ການຝຶກອົບຮົມກ່ຽວກັບການຄວບຄຸມຢາປາບສັດຕູພືດ:* ຈຸດປະສົງແມ່ນເພື່ອໃຫ້ຄວາມຮູ້ພື້ນຖານໃຫ້ແກ່ເປົ້າໝາຍຊາວກະສິກອນໃນຮູບແບບການປ້ອງກັນຢາປາບແມງໄມ້, ຜົນກະທົບທາງລົບໃນການນໍາໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີຕໍ່ສະພາບແວດລ້ອມ ແລະ ສຸຂະພາບຂອງມະນຸດ, ແລະ ວິທີຫລຸດຜ່ອນຜົນກະທົບຈາກການນໍາໃຊ້ຢາຂ້າສັດຕູພືດ ແລະ ປຸຍເຄມີ, ຖ້າມີຄວາມຕ້ອງການນໍາໃຊ້ມັນ. ຈຸດປະສົງຂອງການຝຶກອົບຮົມ ກ່ຽວກັບແຜນຄວບຄຸມຢາຂ້າແມງໄມ້ ແມ່ນເພື່ອໃຫ້ຊາວກະສິກອນຮູ້ວ່າ, ລັດຖະບານລາວຈະບໍ່ມີຄວາມມຸ່ງຫວັງຈະຊຸກຍູ້ໃນການນໍາໃຊ້ຢາຂ້າແມງໄມ້ ແລະ ປຸຍເຄມີທຸກປະເພດໃນການຜະລິດກະສິກໍາແຕ່ ເປັນການສົ່ງເສີມແລະການສະຫງວນກະສິກໍາແທນ; ເຖິງຢ່າງໃດກໍ່ຕາມ ປະເທດລາວມີປະສົບປະການ ຫລາຍໃນວຽກງານປອງກັນຢາປາບສັດຕູພືດ ແລະ ສາມາດແນະນໍາການໃຊ້ຢາປາບສັດຕູພືດ ແລະປຸຍເຄມີ ໃນບາງກໍລະນີທີ່ມີຂອບເຂດຈໍາກັດ ແລະ ມີຜົນເສຍຫາຍຕໍ່ຜົນຜະລິດກະສິກໍາ. ໃນ ທລຍ 2 ການຈັດຊື້ຢາຂ້າແມງໄມ້ ແລະ ປຸຍເຄມີຈະບໍ່ອານຸຍາດໃຫ້. ເຖິງຢ່າງໃດກໍ່ຕາມ ທລຍ 2 ກໍ່ຍັງເຮັດວຽກໃນຂັ້ນບ້ານ ເພື່ອຊຸກຍູ້ໂຄງລ່າງກະສິກໍາ ແລະ ກິດຈະກໍາປັບປຸງຊີວິດການເປັນຢູ່ໂດຍຜ່ານທຶນຂອງປະເພດຍີ່ປຸ່ນ (JSDF)ຈະຕ້ອງໄດ້ມີການຝຶກອົບຮົມກ່ຽວກັບການຄວບຄຸມຢາປາບສັດຕູພືດດັ່ງທີ່ໄດ້ລະບຸໃນແຜນຄວບຄຸມຢາປາບສັດຕູພືດນີ້.

- *ການຝຶກອົບຮົມກ່ຽວກັບລະບຽບຫລັກການຂອງລັດຖະບານ:* ປະເທດລາວມີປະສົບການໃນການຄວບຄຸມການໃຊ້ຢາປາບສັດຕູພືດ ແລະ ປຸຍເຄມີຈາກປະເທດໃກ້ຄຽງເປັນຢ່າງດີ. ທລຍ 2 ຈະຝຶກອົບຮົມໃຫ້ກຸ່ມເປົ້າໝາຍຊາວກະສິກອນ ກ່ຽວກັບກົດລະບຽບການຄວບຄຸມຢາປາບສັດຕູພືດ ເລກທີ 2860/ກຊກປ ກ່ອນການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ຕ້ອງປະຕິບັດຕາມນະໂຍບາຍ ກ່ຽວກັບການປ້ອງກັນສັງຄົມຂອງຜູ້ໃຫ້ທຶນ (ຫົວຂໍ້ 4.09 ກ່ຽວກັບການຄວບຄຸມຢາປາບສັດຕູພືດ)
- *ການຝຶກອົບຮົມວິຊາການກະສິກຳ:* ການຝຶກອົບຮົມຈະຊ່ວຍໃຫ້ຊາວກະສິກອນເຂົ້າໃຈແຈ່ມແຈ້ງ ກ່ຽວກັບລັກສະນະຂອງຢາປາບສັດຕູພືດ ແລະ ຄວາມຊຳນານໃນການນຳໃຊ້ຢາເຊັ່ນ: ຂໍ້ເລືອກເຟັ້ນ, ແລະ ລາຍການບໍ່ສະໜັບສະໜູນຂອງຢາປາບສັດຕູພືດໃນລາວ, ລະດັບຜົນກະທົບຂອງແຕ່ລະຢາປາບສັດຕູພືດ, ວິທີການນຳໃຊ້, ວິທີການປ້ອງກັນ ແລະ ວິທີການຫລຸດຜ່ອນຜົນກະທົບໃນຄະນະນຳໃຊ້ມັນ, ວິທີການເກັບຮັກສາຢ່າງປອດໄພກ່ອນ ແລະ ຫລັງນຳໃຊ້ ແລະ ອື່ນໆ. ໂຄງການຈະໄດ້ນຳໃຊ້ຄູຝຶກມາຈາກພະແນກກະສິກຳ ແລະ ປ່າໄມ້ຫລືຈາກຫ້ອງການກະສິກຳ ແລະ ປ່າໄມ້ເປັນຜູ້ທີ່ມີຄວາມຮູ້ດີກ່ຽວກັບຫົວຂໍ້ນີ້ .ທລຍ 2 ຈະໃຫ້ການສະໜັບສະໜູນໃນງົບປະມານຝຶກອົບຮົມລວມ ທັງອັດຕາກິນ ແລະ ຄ່າເດີນທາງສຳລັບຄູຝຶກ, ຖ້າຈຳເປັນ.
- *ການຈັດຊື້, ການເກັບຮັກສາ ແລະ ການນຳໃຊ້ຢາປາບສັດຕູພືດ:* ການຈັດຊື້, ການເກັບຮັກສາ ແລະ ການຕິດຕາມຂອງການນຳໃຊ້ຢາປາບສັດຕູພືດ ພາຍໃຕ້ໂຄງການພັດທະນາຊີວິດການເປັນຢູ່ເຂດເນີນສູງ (LUFSIP) ແມ່ນຄວາມຮັບຜິດຊອບຂອງກຸ່ມປູກຝັງ. ກຸ່ມປູກຝັງຈະຕ້ອງເອົາໃຈໃສ່ຕິດຕາມໃນຫົວຂໍ້ 18 ແລະ 19 ຂອງກົດລະບຽບເລກທີ 2860/ກຊກປ ຂອງກະຊວງກະສິກຳ ໃນເວລາຈັດຊື້ຢາປາບສັດຕູພືດດັ່ງກ່າວ; ຫົວຂໍ້ 20, 21 ແລະ 22 ແມ່ນສຳລັບການຂົນສົ່ງ, ການເກັບຮັກສາ ແລະ ການຂົນສົ່ງຂ້າມແດນ ແລະຫົວຂໍ້ 23 ແລະ 24 ແມ່ນສຳລັບການນຳໃຊ້ໃຫ້ມີຄວາມປອດໄພ. ກຸ່ມປູກຝັງ ຫລື ຜູ້ນຳໃຊ້ຈະຕ້ອງອີງຕາມພາກເພີ່ມເຕີມໃນຫົວຂໍ້ 25 ແລະ 26 ສຳລັບການເກັບຮັກສາ ແລະ ການນຳໃຊ້ຢາຂ້າແມງໄມ້.

## ວຽກງານສົ່ງເສີມກະສິກຳປອດສານເຄມີ(ສານພິດ)

ທລຍ 2 ແມ່ນໄດ້ອອກແບບໃຫ້ສົ່ງເສີມວຽກງານປົກປັກຮັກສາຊັບພະຍາກອນທຳມະຊາດໃນເວລາທີ່ເປັນໄປໄດ້. ມັນເປັນຄວາມມຸ່ງຫວັງຂອງ ທລຍ 2 ເພື່ອເຊື່ອມສານກິດຈະກຳກະສິກຳໃຫ້ຕິດພັນກັບວຽກງານເຕັກນິກນິເວດກະສິກຳ ແມ່ນເປັນສິ່ງສຳຄັນສຳລັບການປັບປຸງຄຸນນະພາບຊີວິດຂອງຊາວກະສິກອນ. ສ່ວນຫລາຍແລ້ວກິດຈະກຳຂອງ ທລຍ ແມ່ນຕັ້ງຢູ່ເຂດຫ່າງໄກສອກຫລີກ, ຄວາມຍືນຍົງຂອງການນຳໃຊ້ຊັບພະຍາກອນທຳມະຊາດ ແມ່ນເປັນບັນຫາທີ່ສຳຄັນສຳລັບການພັດທະນາຊີວິດການເປັນຢູ່ ແລະ ຫລຸດຜ່ອນຄວາມທຸກຍາກ. ຖ້າພື້ນທີ່ປ້ອງກັນ ຫລື ແຫ່ລງທີ່ຢູ່ອາໃສທຳມະຊາດທີ່ສຳຄັນຕັ້ງຢູ່ໃກ້, ມັນຈຳເປັນຕ້ອງໄດ້ມີວິທີການຫລຸດຜ່ອນຜົນກະທົບທາງລົບ ແລະ/ຫລື ສົ່ງເສີມໃຫ້ມີຜົນກະທົບທາງບວກໂດຍຜ່ານຂະບວນການພັດທະນາແບບຂັບເຄື່ອນໂດຍຊຸມຊົນ. ໃນຮູບແບບ (ເຕັກນິກນິເວດກະສິກຳ) ຈະຕ້ອງໄດ້ສະເໜີໃຫ້ກຸ່ມເປົ້າໝາຍຊຸມຊົນ. ໃນໄລຍະວາງແຜນ, ກິດຈະກຳດັ່ງຈະຕ້ອງໄດ້ປະຕິບັດຮ່ວມກັນລະຫ່ວາງ ທລຍ ແລະ ພະແນກກະສິກຳ ແລະ ປ່າໄມ້ ເພື່ອວາງແຜນຝຶກອົບຮົມຊາວກະສິກອນ.

## ການຈັດຕັ້ງປະຕິບັດ ແລະ ແຜນງົບປະມານ

### ກ) ການວາງແຜນແລະການຈັດຕັ້ງປະຕິບັດ

ດ້ວຍການປະສານງານກັບພະແນກກະສິກຳຢ່າງໃກ້ສິດ, ພະນັກງານ ທລຍ ຂັ້ນສູນກາງຈະຮັບຜິດຊອບຈັດຝຶກອົບຮົມໃຫ້ພະນັກງານ ທລຍ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ປະສານງານກຸ່ມບ້ານໃນໄລຍະການປຶກສາຫາລື ແລະ ວາງແຜນ ທລຍ 2. ງົບປະມານສຳລັບຝຶກອົບຮົມ/ສ້າງຄວາມເຂັ້ມແຂວງ ຈະໄດ້ລວມເຂົ້າໃນການຄິດໄລມູນຄ່າຂອງ ໂຄງການຍ່ອຍໃຫ້ເໝາະສົມ.

**ຂ) ການຕິດຕາມ**

ພະນັກງານ ທລຍ ຂັ້ນທ້ອງຖິ່ນຈະໄດ້ເຮັດວຽກຮ່ວມກັບພະນັກງານພະແນກກະສິກຳ ເພື່ອຕິດຕາມການນຳໃຊ້ຢາປາບສັດຕູພືດ ໃນກຸ່ມເປົ້າໝາຍຊຸມຊົນລວມມີ: ກ) ຮັບປະກັນການຈັດຊື້ຢາຂ້າແມງໄມ້ໃນລາຍການທີ່ໄດ້ກຳນົດໄວ້ (ເອກະສານຊ້ອນທ້າຍ 1) ຂ) ຮັບປະກັນການຈັດຊື້ຢາຂ້າແມງໄມ້ ໃນການເກັບຮັກສາ ແລະ ຂົນສົ່ງໄປຫາຈຸດເປົ້າໝາຍທີ່ປອດໄພ. ຄ) ຮັບປະກັນຜູ້ນຳໃຊ້ໄດ້ຮັບຝຶກອົບຮົມກ່ອນການແຈກຢາຍ, ແລະ ງ) ຕິດຕາມການນຳໃຊ້ໃຫ້ຖືກຕ້ອງຕາມກົດລະບຽບຂອງກະຊວງກະສິກຳ ເລກທີ 2860/ກຊກປ .ທີມງານຜູ້ໃຫ້ທຶນ ແລະ ທລຍ ສູນກາງ ຈະຮ່ວມລົງຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດໃນໄລຍະທຸກໆ 6 ເດືອນ ເພື່ອກວດກາໃຫ້ຖືກຕ້ອງກັບແຜນຄວບຄຸມການນຳໃຊ້ຢາຂ້າສັດຕູພືດ. ທີມງານຜູ້ໃຫ້ທຶນຈະໃຊ້ປື້ມຄູ່ມືການຄວບຄຸມຢາປາບສັດຕູພືດເປັນມາດຕະຖານໃນການຕິດຕາມການຈັດຊື້ຢາຂ້າແມງໄມ້ພາຍໃຕ້ໂຄງການ.

## ເອກະສານຊ້ອນທ້າຍ 1: ປະເພດໂຄງການທີ່ບໍ່ໃຫ້ການສະໜັບສະໜູນ

ເພື່ອຫລີກລ້ຽງຜົນກະທົບດ້ານລົບຕໍ່ຜູ້ໄດ້ຮັບຜົນປະໂຫຍດເປົ້າໝາຍ ກໍ່ຄືຊົນເຜົ່າ ໂດຍສະເພາະແມ່ນກຸ່ມທີ່ເສຍຜົນປະໂຫຍດ, ລາຍການທີ່ບໍ່ສະໜັບສະໜູນ ແລະ ລາຍການທາງເລືອກຈະຖືກນຳໃຊ້. ລາຍການທີ່ບໍ່ສະໜັບສະໜູນມີດັ່ງລຸ່ມນີ້:

(1) ການຍົກຍ້າຍ ແລະ / ຫລື ການມ້າງທຳລາຍເຮືອນ ຫລື ທີ່ຕັ້ງທຸລະກິດຖາວອນ.

(2) ການໄດ້ມາຂອງທີ່ດິນ ຊຶ່ງມີຜົນກະທົບຕໍ່ກັບປະຊາຊົນຫລາຍກວ່າ 200 ຄົນ ຫລື 40 ຄອບຄົວ.

(3) ການຕັ້ງຖິ່ນຖານໃໝ່ ຫລື ການຂະຫຍາຍຖິ່ນຖານທີ່ມີຢູ່ເດີມພາຍໃນ

(4) ຜົນກະທົບດ້ານລົບທີ່ອາດເກີດຂຶ້ນກັບກຸ່ມຊົນເຜົ່າຢູ່ພາຍໃນບ້ານ ແລະ/ຫລື ຢູ່ບ້ານໃກ້ຄຽງຫລືຜົນກະທົບ ທີ່ບໍ່ເປັນທີ່ຍອມຮັບຂອງຊົນເຜົ່າ ທີ່ດຳລົງຊີວິດຢູ່ໃນບ້ານທີ່ມີຫລາຍຊົນເຜົ່າດຳລົງຊີວິດຢູ່ນຳກັນ.

(5) ຜົນເສຍຫາຍ ຫລື ຄວາມສູນເສຍ ຂອງຊັບສິນທາງວັດທະນະທຳ ຊຶ່ງລວມມີສະຖານທີ່ບູຮານ (ກ່ອນປະຫວັດສາດ), ຊາກດຶກດຳບັນ, ປະຫວັດສາດ, ສາດສະໜາ, ວັດທະນະທຳ ແລະ ສະຖານທີ່ທີ່ມີຄຸນ ຄ່າ ທາງທຳມະຊາດທີ່ເປັນເອກະລັກ.

(6) ການກໍ່ສ້າງທາງເສັ້ນໃໝ່, ການສ້ອມແປງເສັ້ນທາງ, ປູຢາງ ຫລື ຍົກລະດັບທາງໃນຂອບເຂດສິ່ງແວດລ້ອມທຳມະຊາດ ແລະ ຢູ່ໃນເຂດຫວງຫ້າມປະຈຸບັນ ຫລືເ ຂດຫວງຫ້າມທີ່ຢູ່ໃນການສະເໜີ

(7) ການຊື້ປືນ; ເລື່ອຍໄຟຟ້າ; ກະເບື້ອງ(asbestos); ແລະການລົງທຶນອື່ນໆທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຫລື ອັນຕະລາຍຕໍ່ກັບສິ່ງແວດລ້ອມ; ການນຳໃຊ້ຢາຂ້າສັດຕູພືດແລະສັດ, ຢາຂ້າແມງໄມ້, ຢາຂ້າຫຍ້າ ແລະ ສານເຄມີທີ່ເປັນອັນຕະລາຍຈຳນວນຫລາຍ. ເຖິງຢ່າງໃດກໍ່ຕາມ ຖ້າການຮຸກຮານ ຂອງສັດ ແລະ ພືດ ຫາກເກີດຂຶ້ນ ແມ່ນອະນຸຍາດໃຫ້ນຳໃຊ້ຢາປາບສັດຕູພືດ ແລະ ສັດທີ່ມີຄຸນນະສົມບັດເໝາະສົມ ແລະ ໄດ້ຮັບການລົງທະບຽນຢູ່ ສປປ ລາວໄດ້ໄປພ້ອມໆກັບການຝຶກອົບຮົມໃຫ້ແກ່ຊາວກະສິກອນກ່ຽວກັບການນຳໃຊ້ທີ່ປອດໄພ.

(8) ຂະບວນການທີ່ກ່ຽວຂ້ອງກັບປ່າໄມ້ ຊຶ່ງລວມມີການຕັດໄມ້, ການເກັບເຄື່ອງປ່າຂອງດົງ ຫລື ການຜະລິດຜະລິດຕະພັນທີ່ເຮັດຈາກໄມ້; ເຖິງຢ່າງໃດກໍ່ຕາມ ການເກັບເຄື່ອງປ່າເຄື່ອງດົງ ຫລື ຜະລິດຕະພັນທີ່ເຮັດຈາກໄມ້ແບບຍືນຍົງ ກໍ່ໄດ້ຮັບອະນຸຍາດໃຫ້ດຳເນີນການ ຖ້າຫາກໄປຄຽງຄູ່ ແຜນການຄຸ້ມຄອງສຳລັບການນຳໃຊ້ຊັບພະຍາກອນແບບຍືນຍົງ.

(9) ການຂຸດຄົ້ນຊັບພະຍາກອນທຳມະຊາດແບບບໍ່ຍືນຍົງ.

(10) ການນຳເຂົ້າພັນພືດ ຫລື ສັດ ທີ່ບໍ່ແມ່ນຂອງທ້ອງຖິ່ນ ນອກຈາກວ່າ ພັນເຫລົ່ານັ້ນ ມີຄວາມໃກ້ ຄຽງ ຫລື ມີຢູ່ໃນສະພາບແວດລ້ອມທີ່ຄ້າຍຄືກັນ ແລະ ບໍ່ເປັນອັນຕະລາຍ

(11) ການປ່ຽນແປງ ຫລື ການເສື່ອມຂອງສິ່ງແວດລ້ອມທຳມະຊາດທີ່ສຳຄັນ ຫລື ຜົນໄດ້ຮັບຈາກການອະນຸລັກ ແລະ / ຫລື ຜົນດີດ້ານສິ່ງແວດລ້ອມຫາກບໍ່ຄຸ້ມກັບສິ່ງທີ່ອາດສູນເສຍໄປ.

(12) ໂຄງການຍ່ອຍທີ່ຈຳເປັນຕ້ອງມີການປະເມີນດ້ານສິ່ງແວດລ້ອມແບບຄົບຊຸດ.

ເອກະສານຊ້ອນທ້າຍ 2.  ກົດລະບຽບ ເລກທີ 2860/ກຊກປ

ເອກະສານຊ້ອນທ້າຍ 3. ລາຍການຢາຂ້າແມງໄມ້ ໃນ ສປປ ລາວ